COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ການນັບຄອບຄົວ ແລະ ເດັກນ້ອຍຂອງທ່ານ

*ມີຄໍາຖາມບໍ? ໂທຫາເບີສາຍດ່ວນການສໍາຫຼວດສໍາມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສໍາລັບພາສາອັງກິດ ແລະ ພາສາອື່ນໆ. ສໍາລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline*

## ຕອບແບບສອບຖາມການສໍາຫຼວດສໍາມະໂນຄົວປີ 2020 ເພື່ອຊ່ວຍຄອບຄົວທ່ານ ແລະ ຊຸມຊົນ!

ເພື່ອຕອບສະໜອງໃນການສໍາຫຼວດພົນລະເມືອງປີ 2020 ໃນການຊ່ວຍຄອບຄົວ ແລະ ຊຸມຊົນຂອງທ່ານ! ຢ່າລືມລວມ ***ທຸກຄົນ***ທີ່ອາໄສໃນທີ່ຢູ່ຂອງທ່ານ -- ເດັກແດງ, ເດັກນ້ອຍ, ສະມາຊິກຄອບຄົວຄົນອື່ນໆ, ແລະ ເພື່ອນຮ່ວມຫ້ອງ. ບາງຄັ້ງອາດລືມລວມເດັກທີ່ຍັງນ້ອຍ, ແຕ່ມັນມີຄວາມສໍາຄັນທີ່ຈະຕ້ອງນັບພວກເຂົາຄືກັນ.

## ຍ້ອນຫຍັງການນັບເດັກນ້ອຍຈຶ່ງສໍາຄັນຫຼາຍ?

ການນັບເດັກນ້ອຍໃນການສໍາຫຼວດພົນລະເມືອງຊ່ວຍໃຫ້ຮູ້ການຈະເລີນເຕີບໂຕ. ເມື່ອທ່ານຕອບສະໜອງການສໍາຫຼວດພົນລະເມືອງ, ທ່ານໄດ້ຊ່ວຍຊຸມຊົນຂອງທ່ານໄດ້ຮັບສ່ວນແບ່ງຂອງແຫຼ່ງທຶນ ແລະ ການບໍລິການຂອງຕົນຢ່າງຍຸຕິທໍາ. ການສໍາຫຼວດພົນລະເມືອງມີຜົນກະທົບຕໍ່:

- ບັນດາໂຄງການຮຽນຮູ້ເບື້ອງຕົ້ນ, ການສຶກສາພິເສດ, ການຊ່ວຍເຫຼືອດ້ານການເບິ່ງແຍງເດັກ ແລະ ການເລີ່ມຕົ້ນ.
- ປະກັນໄພສຸຂະພາບເດັກ ແລະ ເມດີເຄດ (Medicaid)
- ບັນດາໂຄງການຄົວເຮືອນມີລາຍໄດ້ຕໍ່າ
- ການຊ່ວຍເຫຼືອດ້ານອາຫານເສີມ ລວມທັງໂຄງການສໍາລັບ ແມ່ຍິງ, ເດັກແດງ ແລະ ເດັກນ້ອຍ (SNAP ແລະ ໂຄງການ WIC).

ຂໍ້ມູນການສໍາຫຼວດພົນລະເມືອງຈະຖືກນໍາໃຊ້ເຂົ້າໃນການວາງແຜນ ແລະ ຕັດສິນໃຈ. ຕົວຢ່າງ:

- ບັນດາຂົງເຂດໂຮງຮຽນແມ່ນເອົາຕາມຂໍ້ມູນສໍາຫຼວດເພື່ອວາງແຜນສໍາລັບຂະໜາດຂອງໂຮງຮຽນ
- ຜູ້ໃຫ້ບໍລິການດ້ານສຸຂະພາບເອົາຕາມຂໍ້ມູນສໍາຫຼວດເພື່ອການຕັດສິນໃຈລົງທຶນໃນໂຮງໝໍ ແລະ ເປີດຫ້ອງຄລີນິກກອດພະຍາດ

## ຄວນນັບເດັກນ້ອຍແນວໃດ?

ເມື່ອທ່ານຕື່ມໃສ່ແບບຟອມສໍາຫຼວດ, ໃຫ້ລວມທຸກຄົນຜູ້ທີ່ອາໄສຢູ່ນັ້ນນັບແຕ່ວັນທີ 1 ເມສາ, 2020 ເປັນຕົ້ນມາ

ຈື່ໄວ້ໃຫ້ນັບ:

- ✓ ເດັກທຸກຄົນຜູ້ທີ່ອາໄສຢູ່ໃນຄົວເຮືອນທ່ານ, ລວມທັງລູກຫຼານ, ຫຼານສາວ, ຫຼານຊາຍ ແລະ ລູກຂອງໝູ່ເພື່ອນ
- ✓ ເດັກນ້ອຍທີ່ແບ່ງເວລາອາໄສຢູ່ລະຫວ່າງຄົວເຮືອນຢ່າງສະໜໍ່າສະເໝີ, ຖ້າພວກເຂົາອາໄສຢູ່ກັບທ່ານນັບແຕ່ວັນທີ 1 ເມສາ 2020 ເປັນຕົ້ນມາ
- ✓ ເດັກເກີດໃໝ່, ເຖິງແມ່ນວ່າຍັງຢູ່ໂຮງໝໍໃນວັນທີ 1 ເມສາ, 2020 ກໍ່ຕາມ
- ✓ ທຸກຄົນທີ່ກໍາລັງດໍາລົງຊີວິດ ແລະ ນອນຢູ່ໃນຄອບຄົວຂອງທ່ານເລື້ອຍໆ.

*ທ່ານສາມາດຫາຂໍ້ມູນເພີ່ມເຕີມກ່ຽວກັບການສໍາຫຼວດສໍາມະໂນຄົວໄດ້ທີ່ www.CountUsIn2020.org/resources.*